# ການແທກສີຂອງໃບເຂົ້າ

## 1. ເປົ້າໝາຍ ແລະ ຈຸດປະສົງຂອງການແທກສີຂອງໃບເຂົ້າ

ສີຂອງໃບເຂົ້າສາມາດບົ່ງບອກເຖິງຄວາມພຽງພໍ,ການຂາດແຄນ ຂອງທາດອາຫານ, ຫລື ການເກີດພະຍາດຕ່າງໆຂື້ນກັບຕົ້ນເຂົ້າ. ສິ່ງທີ່ສາມາດສັງເກດໄດ້ງ່າຍ ແມ່ນການຂາດແຄນທາດອາສົດ (**N**)

ການແທກສີຂອງໃບເຂົ້າ ໄດ້ຖືກພັດທະນາຂື້ນມາຄັ້ງທໍາອິດຢູ່ປະເທດຍີ່ປຸ່ນ, ຕໍ່ມາກໍ່ມີການພັດທະນາຂື້ນມາໃໝ່ຢ່າງເປັນລະບົບໂດຍ IRRI.

ການແທກສີທາງໃບແມ່ນການໃຊ້ເຄື່ອງມື ວັດແທກລະດັບທາດ N ຂອງຕົ້ນເຂົ້າ ເພື່ອແນໃສ່ ໃນການຈັດການກັບຝຸ່ນ N ໃຫ້ມີປະສິດທິຜົນສູງ.

## 2. ແຜ່ນແທກສີ



ຮູບ: ແຜ່ນແທກສີໃບເຂົ້າ

ແຜ່ນແທກສີ ແມ່ນເຄື່ອງມື ທີ່ໃຊ້ງ່າຍ ແລະ ລາຄາຖືກ ເຊິ່ງຊາວນາໂດຍທົ່ວ ໄປກໍ່ສາມາດນໍາໄປໃຊ້ໄດ້. ໂດຍໃຊ້ແຜ່ນແທກສີປຽບທຽບກັບສີຂອງໃບເຂົ້າດ້ວຍສາຍຕາເປົ່າ, ມັນບົ່ງບອກລະດັບຖານະຂອງທາດ N ທີ່ບັນຈຸ. ໃນກໍລະນີເຫັນພຶດຂາດທາດ N ຜູ້ນໍາໃຊ້ກໍ່ສາມາດກໍານົດອັດຕາຝຸ່ນ N ໃສ່ໄດ້ທັນທີ ຕາມຂໍ້ແນະນໍາ ເຮັດໃຫ້ການນໍາໃຊ້ຝຸ່ນ ມີປະສິດທິຜົນຫລາຍຂື້ນ.

ແຜ່ນແທກສີຈັດເປັນ 6 ລະດັບຄື: ແຕ່ລະດັບ (1) ສີຕອງອ່ອນ ຫາ ລະດັບ (6) ສີຂຽວຊໍ້າ ເຊິ່ງ ມີຂໍ້ແນະນໍາກ່ຽວກັບການນໍາໃຊ້ຝຸ່ນ N ຕາມສີ.

## 3. ຄວາມສໍາຄັນຂອງລະດັບສີ ຫຼື ລັກສະນະຂອງສີ

ຂໍ້ສໍາຄັນຂອງການອ່ານສີຂອງໃບເຂົ້າ ເພື່ອເລັ່ງຝຸ່ນ N ແມ່ນ: ຖ້າຜົນຂອງການວັດແທກໃບເຂົ້າມີຜົນ

- ຈາກລະດັບ (3)ລົງມາ, ສໍາລັບແນວພັນທີ່ໃບຂຽວອ່ອນ (ສໍາລັບຊະນິດເຂົ້າທີ່ມີກິ່ນຫອມ)
- ຈາກລະດັບ (4) ລົງມາ ສໍາລັບເຂົ້າ ຕໍ່າ (Semi- dwarf)
- ຈາກລະດັບ (5) ລົງມາສໍາລັບເຂົ້າພັນປະສົມ (Hybrids)

ນອກຈາກນັ້ນ ສີຂອງໃບເຂົ້າ ອາດແຕກຕ່າງໄປຍ້ອນວິທີການປັກດໍາດ້ວຍ ເຊິ່ງມີມາດຖານການວັດແທກດັ່ງຕາຕະລາງລຸ່ມນີ້ :

| ປະເພດເຂົ້າ | ນາຫວ່ານ, ນາຢອດເມັດ | ປັກດໍາ |
|---|---|---|
| ເຂົ້າຫອມ (Aromatic rice) | — | 3 |
| ເຂົ້າຕໍ່າ (Semi dwarf) | 3 | 3.5 - 4 |
| ລູກປະສົມ (Hybrid) | 4 | 4 |

## 4. ວິທີການນໍາໃຊ້ແຜ່ນແທກສີໃບເຂົ້າ

4.1 ໃຊ້ແຜ່ນແທກສີ ອ່ານສີຂອງໃບເຂົ້າ ຫຼັງຈາກປັກດໍາໄດ້ 14 ວັນ ຫຼື ທຽບສີເມື່ອອາຍຸເຂົ້າໄດ້ 21 ວັນ ສໍາລັບນາ ຫວ່ານ ແລະ ນາຢອດເມັດ. (ໂດຍມີການແທກເປັນປົກກະຕິໃນທຸກໆ 7 ວັນ ຫຼື 14 ວັນ. ແທກສີ ຈົນເຖິງ ວັນເຂົ້າເລີ້ມອອກດອກ).

4.2 ການແທກສີແຕ່ລະຄັ້ງຕ້ອງຢູ່ໃນຊ່ວງດຽວກັນ 8-10 ໂມງເຊົ້າ ຫຼື 2-4 ໂມງແລງ. ໂດຍຫັນຫຼັງບັງແສງແດດໄວ້ໃຫ້ເປັນຮົ່ມ ແລ້ວອ່ານສີໃບເຂົ້າພ້ອມບັນທຶກ.



ຮູບ: ວິທີການແທກສີຂອງໃບເຂົ້າ

4.3 ແຕ່ລະຄັ້ງແທກເອົາ 7-10 ໃບເຂົ້າ ໂດຍຊຸ່ມເອົາແບບບັງເອີນ, ເລືອກແທກໃບທີ່ສົມບູນດີ.

4.4 ເລືອກແທກໃບທີ່ຂະຫຍາຍໂຕເຕັມທີ່ ໃນ 10 ກໍເຂົ້ານັ້ນ ໂດຍແປະເຄິ່ງກາງໃບໃສ່ແຜ່ນທຽບສີ ດັ່ງຮູບຂ້າງເທິງ ( ຫ້າມຖອນ ຫຼື ຕັດໃບເຂົ້ານັ້ນເດັດຂາດ )

4.5 ພາຍຫຼັງການແທກສີຂອງໃບເຂົ້າໄດ້ 7 ຫຼື 10 ໃບ

ແລ້ວຄ່າສະເລ່ຍອອກມາຕ່ຳກ່ອນລະດັບທີ່ກຳນົດໄວ້ ນັ້ນ ຕ້ອງໃສ່ຝຸ່ນ N , (23 Kg N/ha) ສຳລັບລະດູຝົນ ຫຼື ໃສ່ (35 Kg N/ha) ສຳລັບລະດູແລ້ງ.

4.6 ປະລິມານຝຸ່ນ N ທີ່ໃສ່ໃນຊ່ວງໄລຍະການຈະເລີນ ເຕີບໂຕທີ່ແຕກຕ່າງກັນສຳລັບພັນເຂົ້າ Semi dwarf ແມ່ນດັ່ງລຸ່ມນີ້:

| ລ/ດ | ເຂົ້ານາປັກດຳ | ລະດູແລ້ງ | ລະດູຝົນ |
|---|---|---|---|
| 1 | ຫຼັງການປັກດຳ 14 — 28 ວັນ | 30 Kg N/ha | 20 Kg N/ha |
| 2 | ຫຼັງການປັກດຳ 29 — 48 ວັນ | 45Kg N/ha | 30 Kg N/ha |
| 3 | ຫຼັງການປັກດຳ 49 ວັນ ຫາ ອອກດອກ | 30Kg N/ha | 20 Kg N/ha |
| | ເຂົ້ານາຫວ່ານ, ນາຢອດເມັດ | ລະດູແລ້ງ | ລະດູຝົນ |
| 1 | ຫຼັງການຫວ່ານ, ຢອດເມັດ 21 — 34 ວັນ | 30 Kg N/ha | 20 Kg N/ha |
| 2 | ຫຼັງການຫວ່ານ, ຢອດເມັດ 35 — 55 ວັນ | 45 Kg N/ha | 30 Kg N/ha |
| 3 | ຫຼັງການຫວ່ານ, ຢອດເມັດ 56 ວັນ — ອອກດອກ | 30 Kg N/ha | 20 Kg N/ha |






Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 - 732 162. Mobile: 020 - 5526277
Email: cetdu@laoex.org

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ຂໍ້ແນະນຳ

# ການແທກສີຂອງໃບເຂົ້າ



ຮຽບຮຽງໂດຍ :
ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)
ສະໜັບສະໜູນໂດຍ :
ໂຄງການ ສົ່ງເສີມ ກະສິກຳ (LEAP)